ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ຄະນະກຳມະການແຫ່ງຊາດ ເພື່ອຕ້ານ

ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເລກທີ 08 /ຄຕຟງ

ນະຄອນຫຼວງວຽງຈັນ, ວັນທີ 30 MAR 2016

# ຄຳແນະນຳ

## ວ່າດ້ວຍ ການນຳໃຊ້ມາດຕະການຊົ່ວຄາວ ຕໍ່ຊັບສິນທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

- ອີງຕາມກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບເລກທີ 17/ສພຊ, ລົງວັນທີ 10 ກໍລະກົດ 2012;
- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 364/ນຍ, ລົງວັນທີ 13 ຕຸລາ 2014;
- ອີງຕາມໜັງສືສະເໜີຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 244/ສຕຟງ, ລົງວັນທີ 25 ມີນາ 2016.

**ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ອອກຄຳແນະນຳ:**

### ມາດຕາ 1 ຈຸດປະສົງ

ຄຳແນະນຳສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 38 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອເຮັດໃຫ້ວຽກງານການຕ້ານ, ສະກັດກັ້ນ, ຈຳກັດ ແລະ ກຳຈັດ ການຟອກເງິນ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ກຳນົດກົນໄກ ແລະ ຂັ້ນຕອນ ຂອງການກັກ, ການຍຶດ ຫຼື ການອາຍັດ ຊັບສິນ ທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

### ມາດຕາ 2 ມາດຕະການຊົ່ວຄາວ

ມາດຕະການຊົ່ວຄາວ ແມ່ນ ການລະງັບການດຳເນີນທຸລະກຳ, ການກັກ, ການຍຶດ ຫຼື ການອາຍັດ ຊັບສິນ ທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ເມື່ອໄດ້ຮັບແຈ້ງລາຍການບັນຊີຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂອງຄຳແນະນຳສະບັບນີ້ ຈາກອົງການສືບສວນ-ສອບສວນ ຫຼື ມີຂໍ້ມູນຫຼັກຖານຢັ້ງຢືນໜັກແໜ້ນວ່າ

ຊັບສິນທີ່ລູກຄ້າຂອງຕົນນໍາມາດໍາເນີນທຸລະກໍາ ຫຼື ສ້າງສາຍພົວພັນທາງທຸລະກິດນັ້ນ ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງລະງັບການດໍາເນີນທຸລະກໍາ ພ້ອມທັງໃຫ້ກັກຊັບສິນດັ່ງກ່າວໄວ້ ແລ້ວລາຍງານ ໄປຍັງສໍານັກງານຂໍ້ມູນຕ້ານການຟອກເງິນ ແລະ ອົງການສືບສວນ-ສອບສວນ ທີ່ມີສິດອໍານາດໃນທັນທີ. ພາຍຫຼັງທີ່ໄດ້ຮັບລາຍງານ ອົງການສືບສວນ-ສອບສວນ ຕ້ອງອອກຄໍາສັ່ງຍຶດ ຫຼື ຄໍາສັ່ງອາຍັດ ຊັບສິນດັ່ງກ່າວໃນທັນທີ ເພື່ອດໍາເນີນຄະດີຕາມກົດໝາຍ. ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສະຫາກິດໄປສະນີ ສາມາດກັກຊັບສິນດັ່ງກ່າວໄວ້ບໍ່ໃຫ້ເກີນກໍານົດເວລາ 30 ວັນ ລັດຖະການ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມຄໍາສັ່ງຍຶດ ຫຼື ອາຍັດ ຂອງອົງການສືບສວນ-ສອບສວນ ຢ່າງເຄັ່ງຄັດ.

**ມາດຕາ 3 ຊັບສິນ ທີ່ຕ້ອງກັກ, ຍຶດ ຫຼື ອາຍັດ**

ຊັບສິນ ທີ່ຕ້ອງກັກ, ຍຶດ ຫຼື ອາຍັດ ແມ່ນ ຊັບສິນ ດັ່ງຕໍ່ໄປນີ້:

1. ຊັບສິນທີ່ໄດ້ມາຈາກການຟອກເງິນ;
2. ລາຍໄດ້ທີ່ໄດ້ມາຈາກການຟອກເງິນ ຫຼື ການກະທໍາຜິດຕົ້ນ, ວັດຖຸ ທີ່ຈະນໍາໃຊ້ ຫຼື ມີເຈດຕະນາຈະນໍາໃຊ້ເຂົ້າໃນການກະທໍາຜິດ;
3. ຊັບສິນທີ່ໄດ້ຈາກ ຫຼື ໄດ້ນໍາໃຊ້ເຂົ້າໃນ ການກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຊັບສິນທີ່ມີຈຸດປະສົງຈະນໍາໃຊ້ ຫຼື ຈັດຫາ ເພື່ອນໍາໃຊ້ໃຫ້ແກ່ການກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
4. ຊັບສິນທີ່ມີມູນຄ່າເທົ່າທຽມກັບມູນຄ່າ ທີ່ໄດ້ມາຈາກການຟອກເງິນ ຫຼື ກ່ຽວພັນກັບການຟອກເງິນ ຊຶ່ງບໍ່ສາມາດກັກ, ຍຶດ ຫຼື ອາຍັດ ຊັບສິນດັ່ງກ່າວໄດ້ທັນເວລາ.

ການຍຶດ ຫຼື ການອາຍັດ ຊັບສິນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ. ຊັບສິນທີ່ຖືກຍຶດ ຫຼື ອາຍັດ ຕ້ອງມອບໃຫ້ເຈົ້າໜ້າທີ່ກ່ຽວຂ້ອງດໍາເນີນການ ຄຸ້ມຄອງ, ຄວບຄຸມ, ບໍລິຫານ ຫຼື ຈັດການ ຕໍ່ກັບຊັບສິນດັ່ງກ່າວ.

**ມາດຕາ 4 ການລະບຸ ແລະ ການຕິດຕາມ ຊັບສິນ**

ອົງການສືບສວນ-ສອບສວນ ຕ້ອງນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ໃນການລະບຸ ແລະ ການຕິດຕາມ ຊັບສິນຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 3 ຂອງຄໍາແນະນໍາສະບັບນີ້ ໃນເວລາທີ່ມີການສືບສວນ-ສອບສວນຄະດີກ່ຽວກັບການກະທໍາຜິດຕົ້ນ ທີ່ພົວພັນກັບການຟອກເງິນ.

ອົງການສືບສວນ-ສອບສວນ ທີ່ກ່ຽວຂ້ອງ ຕ້ອງອອກຄໍາສັ່ງຍຶດ ຫຼື ອາຍັດ ຊັບສິນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 3 ຂອງຄໍາແນະນໍາສະບັບນີ້ ເມື່ອໄດ້ຮັບຂໍ້ມູນຂ່າວກອງ ຫຼື ຂໍ້ມູນທີ່ກ່ຽວຂ້ອງ ທີ່ຊີ້ໃຫ້ເຫັນເຖິງຫຼັກຖານກ່ຽວກັບຊັບສິນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 3 ຂອງຄໍາແນະນໍາສະບັບນີ້.

ຄໍາສັ່ງຍຶດ ຫຼື ຄໍາສັ່ງອາຍັດ ທີ່ອອກໂດຍອົງການທີ່ມີສິດອໍານາດຕາມກົດໝາຍໄດ້ກໍານົດໄວ້ ຈະຕ້ອງຖືກຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ຫ້າມບຸກຄົນ, ນິຕິບຸກຄົນ ກະທໍາການໃດໜຶ່ງທີ່ເປັນການຂັດຂວາງໃນການປະຕິບັດຄໍາສັ່ງຍຶດ ຫຼື ຄໍາສັ່ງອາຍັດ.

ເຈົ້າໜ້າທີ່ກ່ຽວຂ້ອງ ຕ້ອງອອກຄໍາສັ່ງຍຶດ ຫຼື ຄໍາສັ່ງອາຍັດ ຊັບສິນ ໂດຍບໍ່ມີການແຈ້ງເຕືອນລ່ວງໜ້າ ຖ້າຫາກພົບເຫັນຮ່ອງຮອຍຂອງຊັບສິນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 3 ຂອງຄໍາແນະນໍາສະບັບນີ້.

ຄໍາສັ່ງຍຶດ ຫຼື ຄໍາສັ່ງອາຍັດ ຊັບສິນ ຕ້ອງມີຜົນສັກສິດຈົນກວ່າການດໍາເນີນຄະດີຈະສິ້ນສຸດ.

**ມາດຕາ 5 ຂັ້ນຕອນໃນການຍຶດ ຫຼື ການອາຍັດ ຊັບສິນ**

ຂັ້ນຕອນໃນການຍຶດ ຫຼື ການອາຍັດ ຊັບສິນ ທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ.

**ມາດຕາ 6 ການຮ້ອງຂໍກ່ຽວກັບຊັບສິນທີ່ຖືກກັກ, ຍຶດ ຫຼື ອາຍັດ**

ຜູ້ທີ່ເປັນເຈົ້າຂອງ ຫຼື ມີສ່ວນກ່ຽວຂ້ອງກັບ ຊັບສິນທີ່ຖືກ ຍຶດ ຫຼື ອາຍັດໄວ້ ຕາມມາດຕາ 3 ຂອງຄຳແນະນຳສະບັບນີ້ ຕ້ອງນຳເອົາຂໍ້ມູນຫຼັກຖານ ກ່ຽວກັບຄວາມເປັນເຈົ້າຂອງ ແລະ ແຫຼ່ງທີ່ມາ ຂອງຊັບສິນຢ່າງຖືກຕ້ອງຕາມກົດໝາຍມາຍັ້ງຢືນກັບອົງການໄອຍະການປະຊາຊົນ ພາຍໃນກຳນົດເວລາ 7 ວັນ ລັດຖະການ.

ພາຍຫຼັງໄດ້ຮັບການຮ້ອງຂໍອົງການໄອຍະການປະຊາຊົນ ຈະພິຈາລະນາ ຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

**ມາດຕາ 7 ການເກັບຮັກສາ ຊັບສິນທີ່ໄດ້ມີການຍຶດ ຫຼື ອາຍັດໄວ້**

ອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການ ກັກ, ຍຶດ ຫຼື ອາຍັດ ຊັບສິນຕ້ອງເກັບຮັກສາແຕ່ລະຊັບສິນ ທີ່ຖືກຍຶດ ຫຼື ອາຍັດໄວ້ ຕາມລະບຽບການ ຫຼື ກົດໝາຍທີ່ກ່ຽວຂ້ອງ ເພື່ອຮັກສາຄຸນນະພາບຂອງຊັບສິນໃຫ້ຄົງຢູ່.

**ມາດຕາ 8 ການຈັດຕັ້ງປະຕິບັດ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ອົງການສືບສວນ-ສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 9 ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

**ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານ**
**ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ປະທານ

ດຣ.ບຸນປອນ ບຸດຕະນະວົງ